# <u>ແຜນການສອນ:</u>

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 15 ພຶສຈິກາ 2009 (11-15-2009)

---

## <u>ປະຕິບັດຢ່າງສເມີພາບກັບທຸກຄົນ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ຢາໂກໂບ 2:1-13)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>** ບົດຮຽນນີ້ກ່ຽວກັບການເຮັດໃຫ້ມີຄວາມສັມພັນກັນກັບຄົນອື່ນໂດຍປາສຈາກການຕັດສິນລ່ວງໜ້າ ຫລືມີຄວາມລຳອຽງ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:</u>** ຢູ່ໃນສັງຄົມຂອງພວກເຮົາແມ່ນຫລິງໄຫລໄຝ່ຝັນຍ້ອງຍໍສັຣເສີນກັບບັນດາຜູ້ຄົນທີ່ມີຊື່ສຽງຖານະທາງສັງຄົມ ພ້ອມດຽວກັນນັ້ນກໍຫັນມາຕັດສິນລັງກຽດບັນດາຜູ້ທີ່ມີຖານະຕ່ຳທາງສັງຄົມ. (ຜູ້ທຸກຈົນ) ບົດຮຽນນີ້ໄດ້ເຕືອນສະຕິພວກເຮົາວ່າການເລືອກໜ້າຄົນເທິງພື້ນຖານຄວາມຮັ່ງມີ, ມີຄວາມໂດ່ງດັງທາງສັງຄົມ, ຫລືຄົນພວກນັ້ນຕິດພັນຢູ່ກັບຄວາມເຊື່ອໃນອົງພຣະເຢຊູຄຣິດ. ນີ້ແມ່ນເວລາສຳລັບຄຣິສຕະຈັກຕ້ອງປະເຊີນໜ້າ ແລະຊຳຣະອອກທຸກໆແບບຂອງແນວຄິດທີ່ເລືອກໜ້າຄົນ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**
ທ່ານຈະຖືກທ້າທາຍຕໍ່ການປະຕິເສດການລຳອຽງ ແລະການຕັດສິນລ່ວງໜ້າ ແລະການປະຕິບັດກັບທຸກຄົນໂດຍບໍ່ຄຳນຶງລັກສະນະການນຸ່ງຖືພາຍນອກຂອງເຂົາ ຫລືຖານະຊົນຊັ້ນໃນສັງຄົມດ້ວຍຄວາມຊື່ສັດ ແລະນັບຖື.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**
1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລົ້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ……..
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ</u>**: ຄຳແນະນຳໃນເຣື່ອງນ້ອຍໆນີ້ທ່ານມີຄວາມຄິດແນວໃດ, "ຊົງໃຫ້ປະຕິບັດທຸກຄົນຢ່າງສເມີພາບກັນ" ສິ່ງດັ່ງກ່າວນີ້ຈະມີທາງເປັນໄປໄດ້ບໍ່? ພວກເຮົາຈະເຮັດແນວໃດໃນເຣື່ອງນີ້?

- ຕົວຢ່າງອີກຢ່າງນຶ່ງຂອງການປະຕິບັດຕໍ່ຄົນອື່ນຢ່າງສເມີພາບກັນຊຶ່ງພົບຢູ່ໃນພຣະທັມມັດທາຍບົດທີ 7:3.

1. **<u>ຢ່າສະແດງຄວາມລຳອຽງ:</u>** (ຢາໂກໂບ 2:1-4)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມຢາໂກໂບ 2:1-4
- ອີກເທື່ອນຶ່ງຢູ່ໃນພຣະທັມກາລາເຕັຽບົດທີ່ 3:28. ໂປໂລໄດ້ເວົ້າເຖິງເຣື່ອງຄວາມເສັຽຫາຍ, ລວມທັງໃນໂບດ

ນໍາ. ຊຶ່ງຢາໂກໂບກໍເວົ້າເຣື່ອງນີ້ຄືກັນ.

- ປະຈຸບັນນີ້ພວກເຮົາກໍາລັງຖືກທ້າທາຍຢ່າງຈິງຈັງ, ໃນການແນະນໍາເພື່ອໃຫ້ພວກເຮົາ "ປະຕິບັດຕໍ່ທຸກຄົນຢ່າງສເມີພາບກັນ" ໂດຍເອົາພຣະທັມອື່ນໆໃນພຣະຄັມພີມາຊ່ອຍສນັບສນູນດ້ວຍ. ຢາໂກໂບບໍ່ໄດ້ຕິດພັນຢູ່ດ້ວຍກັນກັບໂປໂບເທົ່ານັ້ນ. ລາວຍັງໄດ້ຕິດພັນຢູ່ກັບພຣະເຢຊູອີກດ້ວຍ.
- ຖ້າມີຢູ່ໃນໂບດມີການແບ່ງແຍກເລືອກໜ້າຄົນແລ້ວຈະມີຫຍັງເກີດຂຶ້ນ?
- ສະມາຊິກໃນໂບດຈະຕ້ອງເຮັດແນວໃດເພື່ອໃຫ້ການລໍາອຽງໝົດສິ້ນໄປໄດ້?

<u>**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> (ຢາໂກໂບ 2:1-4)

1. ຄວາມເຊື່ອ ແລະຄວາມລໍາອຽງມີຄວາມກ່ຽວພັນກັນແນວໃດ?
2. ຄວາມເສັຽຫາຍທີ່ມີຢູ່ໃນໂບດໃນສມັຍເລີ້ມຕົ້ນນັ້ນແມ່ນຄວາມເສັຽຫາຍປະເພດໃດ?
3. ຢູ່ໃນໂບດທຸກມື້ນີ້ທີ່ມີຄົນລໍາອຽງຮັກບັງຊັງບ່ຽງເລືອກໜ້າຄົນແລ້ວຈະມີຫຍັງເກີດຂຶ້ນ? ບໍ່ແມ່ນກຸ່ມໃດກຸ່ມນຶ່ງຍັງຖືຊັ້ນວັນນະຢູ່ບໍ່?
4. ສະມາຊິກໃນໂບດຄວນຈະເຮັດແນວໃດເພື່ອຫລີກເວັ້ນຈາກການແບ່ງຊັ້ນວັນນະພາຍໃນໂບດໄດ້? ໃນການດໍາຣົງຊີວິດປະຈໍາວັນເດເຮັດແນວໃດ?

## 2. <u>ໃຫ້ກຽດແກ່ຜູ້ຂັດສົນ:</u> (ຢາໂກໂບ 2:5-7)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຢາໂກໂບ 2:5-7
- ພຣະເຈົ້າຊົງຮັກຄົນທຸກຫລາຍກວ່າຄົນຮັ່ງມີບໍ່? ຫລັງຈາກສົນທະນາກັນເຣື່ອງນີ້ແລ້ວ ໃຫ້ອ່ານພຣະທັມມັດທາຍ19:16-26; ກິຈການ10:34-35; 1 ໂກຣິນໂທ 1:26-31.ທ່ານຈະປຽບທຽບຂໍ້ພຣະທັມເຫລົ່ານີ້ໃສ່ຜູ້ທີ່ຮັ່ງມີ, ຄົນຍາກຈົນ, ຜູ້ທີ່ຮັ່ງມີສົມບູນດ້ວຍຄວາມເຊື່ອຫລື?
- ໃນເມື່ອພວກເຮົາອ່ານພຣະທັມ, ພວກເຮົາຢາກກາຍມາເປັນຄົນດີ. ໃນກໍຣະນີນີ້ຄົນທີ່ຍາກຈົນເປັນຄົນຮັ່ງມີຝ່າຍຈິດວິນຍານ. ພວກເຮົາເຊັ່ນດຽວກັນຢາກເປັນຄົນທີ່ບໍ່ຖືຍົດຖືສັກບໍ່ຢາກເປັນຄົນທີ່ສະແດງຕົນເປັນຜູ້ລໍາອຽງ. ພວກເຮົາສ່ວນຫລາຍບໍ່ຮັ່ງມີດ້ວຍເງິນທອງ, ຕາມມາຕຖານຂອງໂລກທີ່ຮັ່ງມີ, ແຕ່ພວກເຮົາກໍສາມາດເປັນຄົນຮັ່ງມີທາງຄວາມເຊື່ອທາງດ້ານຈິດໃຈແລະຈິດວິນຍານໄດ້ຢ່າງມີຄວາມສຸກ.
- ພວກເຮົາຈະສອນໃຫ້ຄົນໃນໂບດຂອງພວກເຮົາໃຫ້ກຽດແກ່ຄົນຜູ້ທີ່ຂັດສົນແນວໃດ?
- ມັນເປັນໂອກາດີແນວໃດທີ່ພວກເຮົາໄດ້ໃຫ້ກຽດແກ່ຄົນຂັດສົນ?
- ເປັນຫຍັງຈຶ່ງມີຫລາຍຄົນສາມາດໃຫ້ກຽດແກ່ຄົນເຫລົ່ານັ້ນໄດ້ ແຕ່ພ້ອມກັນນັ້ນເປັນຫຍັງຫລາຍຄົນຈຶ່ງເຮັດບໍ່ໄດ້?

<u>**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> ຢາໂກໂບ 2:5-7

1. ເມື່ອພວກເຮົາຫັນໜີຈາກຫລືບໍ່ເຮັດນໍາຜູ້ທີ່ຂັດສົນແລ້ວ, ຢາໂກໂບວ່າພວກເຮົາເປັນຄົນຢ່າງໃດ?
2. ໃນໂລກຂອງພວກເຮົາທຸກມື້ນີ້, ສ່ວນຫລາຍແມ່ນຜູ້ທີ່ຂັດສົນຍາກຈົນເປັນຜູ້ທີ່ຕິດຕາມພຣະຄຣິດແລະຖືກກົດຂີ່ຂົ່ມເຫງຈາກຄົນຮັ່ງມີແມ່ນບໍ່?
3. ຈຸດນີ້ໄດ້ມີຄວາມສໍາຄັນແນວໃດຕໍ່ຢາໂກໂບ?
4. ການສະແດງຄວາມລໍາອຽງເປັນບາບບໍ່? ຖ້າເປັນແມ່ນຄວາມຜິດຂອງໃຜ?
5. ດ້ວຍເຫດຜົນອັນໃດທີ່ຢາໂກໂບໄດ້ໃຫ້ກຽດແກ່ຂົນຂັດສົນ?

3 . **ຊັຍຊະນະດ້ວຍຄວາມເມດຕາ:** (ຢາໂກໂບ 2:8-13)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຢາໂກໂບ 2:8-13
- ໃຫ້ນັກຮຽນເປີດໄປພຣະທັມລະບຽບເລວີ 19:18. ໄດ້ອະທິບາຍເຖິງເຣື່ອງການເຮັດດີກັບຄົນອື່ນຊຶ່ງເປັນຮາກຖານໃນພຣະຄັມພີເດີມ. ຂໍໃຫ້ນັກຮຽນໃຫ້ຕົວຢ່າງຈາກພຣະບັນຍັດ 10 ປະການທີ່ໄດ້ຕັກເຕືອນໄວ້ເຖິງເຣື່ອງສາຍສັມພັນຂອງພວກເຮົາກັບພຣະເຈົ້າ ແລະຂໍ້ຄຳສັ່ງເຫລົ່ານີ້ສຳລັບທຸກໆຄົນ ທຸກໆຊົນຊາດຊົນຊັ້ນວັນນະ, ບໍ່ໃຫ້ເລືອກໃຫ້ກຽດແຕ່ຜູ້ນຶ່ງຜູໃດເທົ່ານັ້ນ.
- ໃຫ້ອະທິບາຍເຖິງການເຮັດຜິດຕໍ່ກົດຣະບຽບຂໍ້ນຶ່ງກໍເຮັດໃຫ້ຄົນນັ້ນໄດ້ຮັບຄວາມຜິດຖານການລະເມີດທັງໝົດ.
- ທີ່ນີ້ຢາໂກໂບໄດ້ແນະນຳຄວາມຄິດເຫັນແຫ່ງຄວາມເມດຕາ, ທັງຜູ້ໃຫ້ ແລະຜູ້ຮັບ, ເພາະວ່າທຸກຄົນກໍຖືວ່າເປັນຜູ້ທີ່ມີຄວາມຜິດ, ບັນດາຜູ້ເຊື່ອທຸກຄົນຂຶ້ນຢູ່ກັບພຣະເຈົ້າຈະເມດຕາຕາມຄວາມເຊື່ອຂອງເຂົາ.
- ເປັນຫຍັງຈຶ່ງໃຫ້ພວກເຮົາເມດຕາຊຶ່ງກັນແລະກັນ? ພວກເຮົາຈະເຮັດຢ່າງນັ້ນໄດ້ຢ່າງໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ຢາໂກໂບ 2:8-13

1. ແມ່ນອັນໃດເປັນ "ກົດເກນຂອງກົດບັນຍັດ" ຢາໂກໂບເວົ້າວ່າຜູ້ທີ່ປະຕິບັດຕາມບັນຍັດໄວ້ວ່າຢ່າງໃດ?
2. ຕັ້ງແຕ່ຄວາມບາບຂອງພວກເຮົາໄດ້ເຮັດໃຫ້ພວກເຮົາມີຄວາມເສັຽຫາຍທີ່ສະແດງອອກເໝືອນກັບວ່າພວກເຮົາໄດ້ລ່ວງລະເມີດກົດບັນຍັດທັງໝົດ ແລ້ວແມ່ນຫຍັງທີ່ພວກເຮົາຍັງມີຄວາມຫວັງຢູ່?
3. ບາງກຸ່ມໃນໂບດຊຶ່ງບາງເທື່ອອາດເປັນເຫຍື່ອແຫ່ງຄວາມລຳອຽງນັ້ນຢູ່ຈົນຮອດປະຈຸບັນນີ້ມີບໍ່?
4. ຄຣິສຕຽນຈະຕ້ອງເປັນຜູ້ຮັບຜິດຊອບໃນການສະແດງຄວາມເມດຕາຢ່າງໃດ?

**ພຣະຄັມພີແຫ່ງຄວາມຈິງ**

- ຄຣິສຕຽນຄວນຍອມຮັບທີ່ມີຊີວິດຢູ່ໃນທ່າມກາງຄວາມສັບສົນ ແລະຄວາມຜິດພາດໃນໂບດໄດ້.
- ຜູ້ທີ່ເຊື່ອບໍ່ຄວນເອົາໃຈໃສ່ຜູ້ທີ່ຕົນໄດ້ຊ່ອຍຫລາຍກວ່າເອົາໃຈໃສ່ຕໍ່ຜູ້ທີ່ເຂົາສາມາດຊ່ອຍຕົນ.
- ໂບດ ແລະຫ້ອງຮຽນພຣະຄັມພີຕ້ອງທຳງານໃຫ້ປາສຈາກສະຖານນະພາບທີ່ເປັນຢູ່ (ການລຳອຽງ)
- ໂບດຍິນດີຕ້ອນຮັບທຸກຄົນສເມີພາບກັນ.
- ການມີລັກສະນະນິສັຍເຫລື້ອມໃສໃນພຣະເຈົ້າພ້ອມທັງການນຳມາໃຊ້ ດູແລຜູ້ຍາກຈົນດ້ວຍການໃຫ້ກຽດແລະໃຫ້ຄວາມສົນໃຈແກ່ເຂົາເຈົ້າຕາມແບບຢ່າງຂອງພຣະເຈົ້າ.
- ຮັກເພື່ອນບ້ານເໝືອນຮັກຕົນເອງບໍ່ໝາຍຄວາມວ່າຕາມເນື້ອໜັງພາຍນອກ, ດ້ານນອກ,ແບ່ງແຍກ, ເລືອກໜ້າຄົນເໝືອນດັ່ງຊາວໂລກເຮັດຕໍ່ຄົນອື່ນ, ສຳລັບຄຣິສຕຽນແມ່ນສເມີພາບໃນທຸກກໍຣະນີປະເພດຄົນ.
- ພາຣະໜ້າທີ່ຂອງພວກເຮົາແມ່ນເຊື່ອຟັງທຸກຂໍ້ຄຳສັ່ງຂອງພຣະເຈົ້າ.
- ພຣະເຈົ້າໄດ້ຊົງສຳແດງຄວາມເມດຕາຕໍ່ທຸກຄົນ, ພວກເຮົາກໍຕ້ອງສະແດງຄວາມເມດຕາຕໍ່ຊຶ່ງກັນແລະກັນ.

**ອຸປຖັມໂດຍ ລາວຊາວເທິນບັບຕິສສັມພັນ www.lsbf.org by JH**